# Course: Human Development Economics

# Week 11

## Demand and Supply for Labor

Phavone Keodouangkham
Souphanouvong University

# ວິຊາ: ເສດຖະສາດພັດທະນາຊັບພະຍາກອນມະນຸດ

# ອາທິດທີ 11

## ອຸປະສົງ ແລະ ອຸປະທານ ແຮງງານ

ພາວອນ ແກ້ວດວງຄໍາ

ມະຫາວິທະຍາໄລ ສຸພານຸວົງ

# ເນື້ອໃນການນຳສະເໜີ

ຄວາມຫມາຍຂອງອຸປະສົງແຮງງານ

ແບບຈຳລອງຢ່າງງ່າຍໆ ຂອງອຸປະສົງ

ອຸປະສົງຂອງແຮງງານໃນໄລຍະສັ້ນ

ອຸປະສົງຂອງແຮງງານໃນໄລຍະຍາວ

ຄວາມໝາຍຂອງອຸປະທານແຮງງານ.

ສະຖິຕິການສະໜອງແຮງງານຂອງແຕ່ລະບຸກຄົນວ່າ ມີຫຼັກເກນໃນການຕັດສິນໃຈສະໜອງຂາຍແຮງງານແນວໃດ.

ຄວາມໝາຍຂອງຜົນຜະລິດທາງດ້ານລາຍໄດ້ ແລະ ຜົນຜະລິດທາງດ້ານການທົດແທນຕະຫຼອດຈົນສະແດງວິທີຫາຜົນທັງສອງ ດັ່ງກ່າວໄດ້.

ຄວາມໝາຍຂອງອຸປະທານແຮງງານຂອງຕະຫຼາດທັງໃນໄລຍະສັ້ນ ແລະ ໄລຍະຍາວໄດ້.

# REVIEW (ທົບທວນບົດຮຽນ)

1. ຈົ່ງໃຫ້ຄວາມໝາຍຂອງແຮງງານ ?
2. ຈົ່ງອະທິບາຍບັນຫາແຮງງານ ແລະ ກົນໄກການແກ້ໄຂບັນຫາແຮງງານໃນລະບົບເສດຖະກິດ ມີຄືແນວໃດ?

# ອຸປະສົງຂອງແຮງງານ (Demand for Labor)

# ຄວາມຫມາຍຂອງອຸປະສົງແຮງງານ

ອຸປະສົງຂອງແຮງງານ ຫມາຍເຖິງ ປະລິມານຕ່າງໆ ຂອງແຮງງານທີ່ຜູ້ສະເຫນີຊື້ແຮງງານ ຫລື ນາຍຈ້າງຕ້ອງການຈ້າງງານ ລະດັບອັດຕາຄ່າຈ້າງຕ່າງກັນໃນຊ່ວງເວລາໃດເວລາຫນຶ່ງ

# ອຸປະສົງຂອງແຮງງານເປັນອຸປະສົງຕໍ່ເນື່ອງ (DERIVED DEMAND)

ລັກສະນະຂອງອຸປະສົງຂອງແຮງງານຈຶ່ງເປັນອຸປະສົງຕໍ່ເນື່ອງ (DERIVED DEMAND) ການທີ່ກ່າວວ່າ ແຮງງານເປັນອຸປະສົງຕໍ່ເນື່ອງ (DERIVED DEMAND) ຫມາຍຄວາມວ່າ ອຸປະສົງຂອງແຮງງານຈະຫລາຍຂຶ້ນ ຫລື ຫລຸດລົງຂຶ້ນຢູ່ກັບອຸປະສົງໃນສິນຄ້າ ແລະ ບໍລິການທີ່ໃຊ້ແຮງງານນັ້ນຜະລິດ ຖ້າອຸປະສົງໃນສິນຄ້າ ແລະ ບໍລິການຊະນິດໃດຊະນິດຫນຶ່ງສູງຂຶ້ນ ຈະມີຜົນເຮັດໃຫ້ອຸປະສົງຂອງແຮງງານທີ່ເຮັດການຜະລິດສິນຄ້າ ແລະ ບໍລິການຊະນິດນັ້ນສູງຂຶ້ນນຳ

# ແບບຈຳລອງຢ່າງງ່າຍໆ ຂອງອຸປະສົງ

**ຂໍ້ສົມມຸດ**

- ນາຍຈ້າງຕ້ອງການກຳໄລສູງສຸດ
- ມີປັດໃຈການຜະລິດ 2 ຊະນິດ ຄືແຮງງານ ແລະ ທຶນ
- Q = F(L,K)………………………………………………………………..(7.1)
- ໂດຍທີ່ Q = ຜົນຜະລິດ
- L = ປັດໃຈແຮງງານ
- K = ປັດໃຈທຶນ

# ເສັ້ນອຸປະສົງຂອງແຮງງານໃນໄລຍະສັ້ນ

**ສະແດງເສັ້ນອຸປະສົງຂອງແຮງງານເມື່ອປັດໃຈທຶນຄົງທີ່ : ໄລຍະສັ້ນ**



# ເສັ້ນອຸປະສົງຂອງແຮງງານໃນໄລຍະຍາວ



# ສະຫຼຸບ

ອຸປະສົງຂອງແຮງງານຄືປະລິມານຕ່າງໆຂອງແຮງງານທີ່ຜູ້ສະເໜີຊື້ແຮງງານ ຫຼື ນາຍຈ້າງຕ້ອງການຈ້າງແຮງງານທີ່ລະດັບຄ່າຈ້າງຕ່າງໆກັນໃນຊ່ວງໄລຍະເວລາໃດໜຶ່ງ ລັກສະນະຂອງເສັ້ນອຸປະສົງຂອງແຮງງານ ເປັນອຸປະສົງຕໍ່ເນື່ອງ ຊຶ່ງໝາຍຄວາມວ່າອຸປະສົງຂອງແຮງງານປ່ຽນແປງເນື່ອງຈາກການປ່ຽນແປງໃນອຸປະສົງສິນຄ້າ ແລະ ບໍລິການ.

# ສະຫຼຸບ

- ລັກສະນະເສັ້ນອຸປະສົງຂອງແຮງງານ ມີລັກສະນະລາກລົງຈາກຊ້າຍໄປຫາຂວາ ໂດຍທົ່ວໄປຈະສະແດງຄວາມສຳພັນລະຫວ່າງອັດຕາຄ່າຈ້າງກັບປະລິມານການຈ້າງແຮງງານໃນທິດທາງກົງກັນຂ້າມ.
- ການປ່ຽນແປງຂອງອຸປະສົງຈະມີໃນ 2 ລັກສະນະຄື ປ່ຽນແປງເທິງເສັ້ນອຸປະສົງເສັ້ນເດີມ ເກີດຂຶ້ນໃນກໍລະນີທີ່ອັດຕາຄ່າຈ້າງປ່ຽນແປງ ປັດໄຈອື່ນໆຄົງທີ່ ແລະ ປ່ຽນແປງທັງເສັ້ນ ເກີດຂຶ້ນໃນກໍລະນີທີ່ປັດໄຈອື່ນໆ ທີ່ກຳນົດອຸປະສົງປ່ຽນແປງໃນຂະນະທີ່ອັດຕາຄ່າຈ້າງຄົງທີ່.

# ອຸປະທານຂອງແຮງງານ (Supply of Labour)

**ຄວາມໝາຍຂອງອຸປະທານຂອງແຮງງານ**

ອຸປະທານຂອງແຮງງານ ໝາຍເຖິງ ປະລິມານຂອງແຮງງານ ( ຊຶ່ງອາດຈະມີການວັດເປັນຊົ່ວໂມງເຮັດວຽກ ຫຼື ຄົນ ) ທີ່ມີຜູ້ສະໜອງຂາຍໃນຕະຫຼາດແຮງງານ ແລະ ລະດັບອັດຕາຄ່າຈ້າງຕ່າງກັນໃນໄລຍະເວລາໃດເວລາໜຶ່ງທີ່ກຳນົດໄວ້.

# ສະຖິຕິການສະໜອງຂາຍແຮງງານ ຫຼື ອຸປະທານແຮງງານຂອງບຸກຄົນ

ກໍລະນີນີ້ມີຫຼັກການໃນການຕັດສິນໃຈຄື: ***ຄົນແຕ່ລະບຸກຄົນຈະຕ້ອງເລືອກສ່ວນປະສົມຂອງການໃຊ້ເວລາພັກຜ່ອນ ກັບລາຍໄດ້ອັນເກີດມາຈາກການໃຊ້ເວລາໃນການເຮັດວຽກທີ່ຈະໃຫ້ຄວາມພໍໃຈສູງສຸດ.***

ການເລືອກຈະຕ້ອງຊັ່ງນໍ້າໜັກລະຫວ່າງຜົນຂອງການພັກຜ່ອນ ກັບການຜະລິດຈາກການໄດ້ຮັບລາຍໄດ້ເພື່ອນໍາໄປຊື້ສິນຄ້າ ແລະ ບໍລິການເພີ່ມຂຶ້ນ (ອັນເນື່ອງມາຈາກການເຮັດວຽກ) ຊຶ່ງໃນການວິເຄາະເລື່ອງການສະໜອງຂາຍແຮງງານ ຄວນພິຈາລະນາເລື່ອງຕ່າງໆ ດັ່ງຕໍ່ໄປນີ້:

- ເສັ້ນຄວາມພໍໃຈເທົ່າກັນ (LEISURE INCOME INDIFFERENCE CURVE: LIIC)
- ເສັ້ນງົບປະມານເທົ່າກັນ (THE BUDGET CONSTRAINT LINE)
- ຄວາມສົມດຸນຂອງຊົ່ວໂມງເຮັດວຽກ (THE DETERMINATION OF HOURS OF WORK)

# ເສັ້ນຄວາມພໍໃຈເທົ່າກັນ (LEISURE INCOME INDIFFERENCE CURVE: LIIC)

- **ຄວາມໝາຍຂອງເສັ້ນຄວາມພໍໃຈເທົ່າກັນ.**

ເສັ້ນຄວາມພໍໃຈເທົ່າກັນ ເປັນເສັ້ນທີ່ສະແດງຄວາມສຳພັນລະຫວ່າງລາຍໄດ້ ເຊິ່ງເປັນຜົນຕອບແທນຈາກການເຮັດວຽກ (ຄ່າຈ້າງ) ກັບເວລາການພັກຜ່ອນ ທີ່ກໍ່ໃຫ້ເກີດຄວາມພໍໃຈລະດັບໜຶ່ງ.

- **ລັກສະນະຂອງເສັ້ນຄວາມພໍໃຈເທົ່າກັນ**

**ກ. ເສັ້ນຄວາມພໍໃຈເທົ່າກັນ (LEISURE INCOME INDIFFERENCE CURVE: LIIC)** ຈະມີລັກສະນະເປັນ NEGATIVE SLOPE ຄື ລາກລົງຈາກຊ້າຍໄປຫາຂວາ ຊຶ່ງສະແດງໃຫ້ເຫັນເຖິງສັດສ່ວນການທົດແທນກັນລະຫວ່າງລາຍໄດ້ກັບເວລາການພັກຜ່ອນ ໂດຍໄດ້ຮັບຄວາມພໍໃຈເທົ່າເດີມ

# ສະແດງເຖິງສັດສ່ວນລະຫວ່າງລາຍໄດ້ກັບເວລາການພັກຜ່ອນ ໃນລະດັບຕ່າງໆ ທີ່ກໍ່ໃຫ້ເກີດຄວາມພໍໃຈເທົ່າກັນ



# ເສັ້ນງົບປະມານ

- ເສັ້ນງົບປະມານແມ່ນເສັ້ນທີ່ສະແດງເຖິງຂອບເຂດ ຫຼື ໂອກາດສູງສຸດທີ່ແຮງງານຈະໄດ້ຮັບລາຍໄດ້ກັບເວລາໃນການພັກຜ່ອນຈາກເວລາທີ່ເຂົາມີຢູ່ໃນໄລຍະເວລາໜຶ່ງ ໂດຍມີຂໍ້ສົມມຸດຖານວ່າ:

ກ. ມີໄລຍະເວລາຈຳກັດ ໝາຍຄວາມວ່າການສະເໜີຂາຍແຮງງານຈະຖືກກຳນົດພາຍໃນໄລຍະເວລາໜຶ່ງເທົ່ານັ້ນ

ຂ.ກຳນົດໃຫ້ຕະຫຼາດແຮງງານເປັນຕະຫຼາດທີ່ມີການແຂ່ງຂັນຢ່າງສົມບູນ

ຄ. ຈະຕ້ອງສາມາດຖາມເຖິງອັດຕາຄ່າຈ້າງຕໍ່ໄລຍະເວລາ




**ການສ້າງເສັ້ນງົບປະມານ**

ເງື່ອນໄຂ ຫຼື ຂໍ້ສົມມຸດຖານຄື:

ກ. ເວລາທັງໝົດມີຈຳກັດ ຄື 1 ວັນມີ 24 ຊົ່ວໂມງ.

ຂ. ອັດຕາຄ່າຈ້າງຊົ່ວໂມງລະ $\frac{OB}{OH}$ ຫຼື $\frac{OB}{24}$ ກີບ

ຈາກຂໍ້ສົມມຸດຖານດັ່ງກ່າວມາຂ້າງເທິງ ເຮົາສາມາດສ້າງເສັ້ນງົບປະມານ (Budget constrain) ໄດ້ດັ່ງສະແດງໃນຮູບທີ່ 8.4

**ຕົວຢ່າງ** 1 : ຖ້າ ທ່ານ ກ ໄດ້ຮັບຄ່າຈ້າງຊົ່ວໂມງລະ 2,000 ກີບ ຈົ່ງຊອກຫາເສັ້ນງົບປະມານຂອງ ທ່ານ ກ ໃນໄລຍະເວລາ 1 ວັນ.

ວິທີຊອກຫາເສັ້ນງົບປະມານຈະເຫັນວ່າ ຂອບເຂດ ຫຼື ໂອກາດສູງສຸດທີ່ແຮງງານໄດ້ຮັບລາຍໄດ້ຈາກເວລາໃນການພັກຜ່ອນຈາກເວລາທີ່ເຂົາມີຢູ່ໃນເວລາ 1 ວັນ ດັ່ງຕາຕະລາງຕໍ່ໄປນີ້:

**ຕາຕະລາງ** ສະແດງລະຫວ່າງຊົ່ວໂມງພັກຜ່ອນກັບໂອກາດທີ່ຈະໄດ້ຮັບລາຍໄດ້

| ເວລາໃນການພັກຜ່ອນ (ຊົ່ວໂມງ) | ລາຍໄດ້ (ກີບ) |
|---|---|
| 0 | 48,000 |
| 1 | 46,000 |
| 2 | 44,000 |
| - | - |
| - | - |
| - | - |
| 23 | 2,000 |
| 24 | 0 |

# ການຊອກຫາຈຸດສົມດູນຂອງຊົ່ວໂມງທຳງານ (THE DETERMINATION OF HOURS OF WORK)

ຮູບ ສະແດງຄຸນນະພາບຂອງຊົ່ວໂມງການເຮັດວຽກ



# ລັກສະນະຂອງເສັ້ນອຸປະທານຂອງແຮງງານ ຫຼື ເສັ້ນການສະເໜີຂາຍແຮງງານ

ເສັ້ນການສະເໜີຂາຍແຮງງານ ເປັນເສັ້ນທີ່ສະແດງຄວາມສຳພັນລະຫວ່າງອັດຕາຄ່າຈ້າງໃນລະດັບຕ່າງໆ ກັບປະລິມານການສະເໜີຂາຍແຮງງານໃນໄລຍະເວລາໜຶ່ງໆ.

ລັກສະນະຂອງເສັ້ນອຸປະທານ ຫຼື ເສັ້ນການສະເໜີຂາຍແຮງງານມີລັກສະນະບໍ່ແນ່ນອນ ບາງຄັ້ງອາດຈະມີຄວາມຊັນເປັນບວກ ແລະ ບາງຄັ້ງອາດຈະມີຄວາມຊັນເປັນລົບ ແລະ ບາງຄັ້ງມີລັກສະນະເປັນເສັ້ນບວກກັບ (BACKWARD BENDING).

1. ໃນກໍລະນີທີ່ເສັ້ນອຸປະທານ ຫຼື ເສັ້ນການສະເໜີຂາຍແຮງງານມີຄວາມຊັນເປັນບວກ ໝາຍຄວາມວ່າ ເມື່ອອັດຕາຄ່າຈ້າງສູງຂຶ້ນແຮງງານຈະສະເໜີຂາຍແຮງງານເພີ່ມຂຶ້ນ ຊຶ່ງອາດຈະເປັນເພາະຕ້ອງການຍົກອັດຕາສ່ວນຄ່າຄອງຊີບໃຫ້ສູງຂຶ້ນ ຫຼື ອາດຈະເປັນເພາະຄົນມັກເຮັດວຽກຫຼາຍຂຶ້ນ
2. ໃນກໍລະນີເສັ້ນອຸປະທານ ຫຼື ເສັ້ນການເສີມຂະຫຍາຍແຮງງານມີຄວາມຊັນເປັນລົບໝາຍຄວາມວ່າ ເມື່ອອັດຕາຄ່າຈ້າງສູງຂຶ້ນ ແຮງງານຈະຫຼຸດຊົ່ວໂມງການເຮັດວຽກ ເພາະເຂົາມີຄວາມພໍໃຈໃນການພັກຜ່ອນຫຼາຍກວ່າເງິນລາຍໄດ້ໃນໜ່ວຍຫຼັງໆ ຊຶ່ງເຂົາໄດ້ຮັບເພີ່ມ ຫຼື ອາດເປັນພວກບໍ່ມັກເຮັດວຽກ ຊຶ່ງມີເປົ້າໝາຍລາຍໄດ້ໄວ້ຕໍ່າ

# ຄວາມໝາຍຂອງຜົນທາງລາຍໄດ້ (INCOME EFFECT) ແລະ ຜົນທາງດ້ານການທົດແທນ (SUBSTITUTION EFFECT)

## ຜົນທາງດ້ານລາຍໄດ້ (INCOME EFFECT)

ໝາຍຄວາມວ່າ ເມື່ອລາຍໄດ້ປ່ຽນແປງຈະເຮັດໃຫ້ແຮງງານປ່ຽນແປງຊົ່ວໂມງເຮັດວຽກ ໂດຍໄດ້ຮັບຄວາມພໍໃຈປ່ຽນແປງຫຼາຍເຊັ່ນ: ເມື່ອລາຍໄດ້ສູງຂຶ້ນ ແຮງງານໃຊ້ເວລາພັກຜ່ອນຫຼາຍຂຶ້ນ ຫຼື ຫຼຸດຊົ່ວໂມງເຮັດວຽກລົງໂດຍໄດ້ຮັບຄວາມພຽນພໍໃຈເພີ່ມຂຶ້ນ ທັງນີ້ເນື່ອງມາຈາກການທີ່ລາຍໄດ້ສູງຂຶ້ນ ອັດຖະປະໂຫຍດເພີ່ມຂອງລາຍໄດ້ທີ່ເພີ່ມຂຶ້ນ 1 ໜ່ວຍຈະຕ່ຳກວ່າ ອັດຖະປະໂຫຍດເພີ່ມຂອງເວລາພັກຜ່ອນ ດັ່ງນັ້ນ, ເມື່ອລາຍໄດ້ເພີ່ມຂຶ້ນ ແຮງງານຈະພໍໃຈໃນເວລາພັກຜ່ອນຫຼາຍກວ່າລາຍໄດ້ໃນໜ່ວຍຫຼັງໆ ທີ່ເຂົາໄດ້ຮັບເພີ່ມຂຶ້ນ ນັ້ນຄືເມື່ອລາຍໄດ້ສູງຂຶ້ນແຮງງານຈະເຮັດວຽກ ແລະ ພັກຜ່ອນເພີ່ມຂຶ້ນ.

ນອກຈາກນີ້ ເຮົາອາດຈະພິຈາລະນາໃນລັກສະນະທີ່ວ່າ ການພັກຜ່ອນເປັນສິນຄ້າປົກກະຕິ (NORMAL GOODS) ເມື່ອມີລາຍໄດ້ສູງຂຶ້ນ ບຸກຄົນຕ່າງໆ ຍ່ອມມີຄວາມຕ້ອງການທີ່ຈະຊື້ສິນຄ້າປົກກະຕິເພີ່ມຂຶ້ນເປັນຈຳນວນຫຼາຍຂຶ້ນ ນັ້ນຄືເມື່ອມີລາຍໄດ້ເພີ່ມຂຶ້ນແຮງງານຈະພັກຜ່ອນເພີ່ມຂຶ້ນ ແລະ ຫຼຸດຊົ່ວໂມງການເຮັດວຽກລົງ.

# ຜົນທາງດ້ານການທົດແທນ (SUBSTITUTION EFFECT)

ໝາຍຄວາມວ່າ ເມື່ອຄ່າຈ້າງປ່ຽນແປງ ຈະເຮັດໃຫ້ແຮງງານປ່ຽນແປງຊົ່ວໂມງເຮັດວຽກ ໂດຍມີຄວາມພໍໃຈເທົ່າເດີມ ນັ້ນຄື ການທີ່ອັດຕາຄ່າຈ້າງສູງຂຶ້ນ ຄົນຈະຫຼຸດຊົ່ວໂມງໃນການພັກຜ່ອນລົງ ແລະ ເພີ່ມຊົ່ວໂມງໃນການເຮັດວຽກຫຼາຍຂຶ້ນ ໂດຍໄດ້ຮັບຄວາມພໍໃຈເທົ່າເດີມ ທັງນີ້ ເນື່ອງຈາກອັດຕາຄ່າຈ້າງສູງຂຶ້ນ ການພັກຜ່ອນມີລາຄາສູງຂຶ້ນ (ເພາະຄ່າເສຍໂອກາດຂອງການພັກຜ່ອນກັບຄ່າຈ້າງ) ເມື່ອປຽບທຽບກັບລາຄາສິນຄ້າ ແລະ ບໍລິການຊະນິດອື່ນໆ

# ລັກສະນະຂອງເສັ້ນການສະເໜີຂາຍແຮງງານ ຫຼື ອຸປະທານແຮງງານຂອງຕະຫຼາດ

ຈາກການສຶກສາລັກສະນະຂອງເສັ້ນການສະເໜີຂາຍແຮງງານ ຫຼື ອຸປະທານແຮງງານຂອງແຕ່ລະບຸກຄົນພົບວ່າ ໃນບາງຄັ້ງເສັ້ນອຸປະທານຂອງແຮງງານມີຄວາມຊັນເປັນບວກ ແລະ ລົບ ແລະ ໃນບາງຄັ້ງກໍ່ມີລັກສະນະເປັນວົກກັບ ດັ່ງນັ້ນ, ທີ່ກ່າວມາແລ້ວໃນຕອນຕົ້ນ ແຕ່ຖ້າພິຈາລະນາການສະເໜີຂາຍແຮງງານຂອງທຸກຄົນຮ່ວມກັນ ມັກຈະພົບວ່າ ມີແນວໂນ້ມທີ່ຈະໝາຍຄວາມວ່າອັດຕາຄ່າຈ້າງກັບປະລິມານການສະເໜີຂາຍແຮງງານຈະປ່ຽນແປງໄປໃນທິດທາງດຽວກັນ ຊຶ່ງການສະເໜີຂາຍແຮງງານຮ່ວມຈະພິຈາລະນາທັງໃນໄລຍະສັ້ນ ແລະ ໄລຍະຍາວ.

1. **ເສັ້ນອຸປະທານໃນໄລຍະສັ້ນ :** ເປັນເສັ້ນທີ່ສະແດງເຖິງຄວາມສຳພັນລະຫວ່າງອັດຕາຄ່າຈ້າງກັບປະລິມານການສະເໜີຂາຍແຮງງານ ຊຶ່ງຈະປ່ຽນແປງໄປໃນທິດທາງດຽວກັນຄື: ຖ້າອັດຕາຄ່າຈ້າງສູງຂຶ້ນປະລິມານການສະເໜີຂາຍແຮງງານ ຫຼື ອຸປະທານຂອງແຮງງານຈະຫຼຸດລົງ

2. **ເສັ້ນອຸປະທານຂອງແຮງງານໃນໄລຍະຍາວ :** ເສັ້ນນີ້ມີລັກສະນະດຽວກັນກັບເສັ້ນອຸປະທານຂອງແຮງງານໃນໄລຍະສັ້ນ ແຕ່ມີຄວາມຫົດຢືດຫຼາຍກວ່າໃນໄລຍະສັ້ນ ເພາະໃນໄລຍະຍາວມີການປ່ຽນແປງສິ່ງຕ່າງໆເຊັ່ນ: ການຝຶກອົບຮົມແຮງງານນ, ການເພີ່ມຂຶ້ນຂອງປະຊາກອນ, ການເຄື່ອນຍ້າຍແຮງງານ ເປັນຕົ້ນ,...

# ການປ່ຽນແປງອຸປະທານຂອງແຮງງານ

1. ຖ້າອັດຕາຄ່າຈ້າງງານປ່ຽນແປງໂດຍປັດໄຈອື່ນໆ  ທີ່ ກຳນົດອຸປະທານຄົງທີ່ ຈະມີຜົນເຮັດໃຫ້ປະລິມານການສະເໜີຂາຍແຮງງານປ່ຽນແປງ ແຕ່ປ່ຽນແປງເທິງເສັ້ນອຸປະທານຂອງແຮງງານເສັ້ນເດີມ
2. ຖ້າອັດຕາຄ່າຈ້າງງານບໍ່ປ່ຽນແປງໂດຍປັດໄຈອື່ນໆ ທີ່ກຳນົດຂະໜາດຂອງອຸປະທານປ່ຽນແປງໃນກໍລະນີນີ້ຈະເຮັດໃຫເສັ້ນອຸປະທານແຮງງານປ່ຽນແປງໄປ.

# ຂະໜາດຂອງອຸປະທານຂອງແຮງງານ

ອຸປະທານຂອງແຮງງານຈະມີຫຼາຍ ຫຼື ນ້ອຍຍ່ອມຂຶ້ນຢູ່ກັບປັດໄຈຕ່າງໆດັ່ງຕໍ່ໄປນີ້:

- ຂະໜາດຂອງປະຊາກອນ:
- ການເຄື່ອນຍ້າຍແຮງງານເຂົ້າມາໃນປະເທດ:
- ການກຳນົດອາຍຸ ແລະ ເພດ ຂອງຜູ້ທີ່ຈະເຂົ້າສູ່ກຳລັງແຮງງານ
- ຊົ່ວໂມງເຮັດວຽກ

# ສະຫຼຸບທົບທວນເນື້ອໃນບົດຮຽນ

ອຸປະທານຂອງແຮງງານຄື: ປະລິມານງານທີ່ຜູ້ສະເໜີຂາຍແຮງງານໃນຕະຫຼາດແຮງງານ ແລະ ລະດັບອັດຕາຄ່າຈ້າງຕ່າງກັນໃນຊ່ວງໄລຍະເວລາໃດເວລາໜຶ່ງ ໃນການສຶກສາເລື່ອງອຸປະທານຂອງແຮງງານ ຫລື ການສະເໜີຂາຍແຮງງານ ມີແນວຄວາມຄິດທາງທິດສະດີວ່າ: ທຸກຄັ້ງທີ່ແຮງງານຕັດສິນໃຈຈະເລືອກເຮັດວຽກຫລາຍ ຫລື ນ້ອຍ ແຮງງານຈະໃຊ້ຫຼັກຄວາມພໍໃຈສູງສຸດເປັນເກນໃນການຕັດສິນໃຈ ໂດຍເລືອກລະຫວ່າງລາຍໄດ້ອັນເກີດຈາກການເຮັດວຽກກັບເວລາໃນການພັກຜ່ອນ ໃນສັດສ່ວນທີ່ເໝາະສົມທີ່ເຮັດໃຫ້ແຮງງານໄດ້ຮັບຄວາມພໍໃຈສູງສຸດ.

# ສະຫຼຸບທົບທວນເນື້ອໃນບົດຮຽນ

ໃນການຕັດສິນໃຈສະເໜີຂາຍແຮງງານ ຈະມີຜົນທາງດ້ານລາຍໄດ້ ແລະ ຜົນທາງດ້ານການທົດແທນໃນກໍລະນີທີ່ຜົນທາງດ້ານລາຍໄດ້ຫລາຍກວ່າ ຜົນທາງດ້ານການທົດແທນຈະມີຜົນເຮັດໃຫ້ການສະເໜີຂາຍແຮງງານມີຄວາມຊັນເປັນລົບ, ແຕ່ຖ້າຜົນທາງດ້ານລາຍໄດ້ນ້ອຍກວ່າຜົນທາງດ້ານການທົດແທນ ຈະມີຜົນເຮັດໃຫ້ເສັ້ນການສະເໜີຂາຍແຮງງານມີຄວາມຊັນເປັນບວກ.

# ສະຫຼຸບທົບທວນເນື້ອໃນບົດຮຽນ

ລັກສະນະຂອງເສັ້ນອຸປະທານແຮງງານ ຫລື ການສະເໜີຂາຍແຮງງານແຕ່ລະບຸກຄະລາກອນມີລັກສະ ນະແຕກຕ່າງກັນບໍ່ແນ່ນອນ ບາງຄັ້ງມີຄວາມຊັນເປັນບວກ, ແຕ່ບາງຄັ້ງມີຄວາມຊັນເປັນລົບ ຫລື ວົກກັບ. ແຕ່ລັກສະນະຂອງເສັ້ນອຸປະທານຂອງແຮງງານໂດຍສ່ວນລວມ ຫລື ອຸປະທານແຮງງານຂອງຕະຫລາດມັກຈະມີຄວາມຊັນເປັນບວກ.

# ສະຫຼຸບທົບທວນເນື້ອໃນບົດຮຽນ

ອຸປະທານຂອງແຮງງານປ່ຽນແປງໄປໄດ້ໃນ 2 ລັກສະນະຄື: ຖ້າອັດຕາຄ່າຈ້າງປ່ຽນແປງໂດຍທີ່ປັດໄຈອື່ນໆ ທີ່ກໍານົດອຸປະທານຄົງທີ່ ອຸປະທານຈະປ່ຽນແປງເທິງເສັ້ນອຸປະທານເສັ້ນເດີມ ແຕ່ຖ້າອັດຕາຄ່າຈ້າງຄົງທີ່ແຕ່ປັດໄຈອື່ນໆ ທີ່ກໍານົດອຸປະທານປ່ຽນແປງຈະເຮັດໃຫ້ເສັ້ນອຸປະທານປ່ຽນແປງໄປ.

# HOMEWORK

1. ຈົ່ງອະທິບາຍຄວາມໝາຍຂອງຄຳຕໍ່ໄປນີ້

    ກ. ຜົນທາງດ້ານການທົດແທນ (SUBSTITUTION EFFECT)

    ຂ. ຜົນທາງດ້ານຜົນຜະລິດ (OUTPUT EFFECT)

2. ອຸປະທານຂອງແຮງງານແມ່ນຫຍັງ? ການສະເໜີຂາຍແຮງງານໃຊ້ລັກສະນະຄືແນວໃດໃນການເລືອກເພື່ອຕັດສິນໃຈວ່າຈະເຮັດວຽກ ຫລື ບໍ່ເຮັດວຽກຫລາຍນ້ອຍພຽງໃດ?

3. ຈົ່ງໃຫ້ເຫດຜົນວ່າເປັນຫຍັງເມື່ອຄ່າຈ້າງສູງຂຶ້ນແຮງງານຈຶ່ງເຮັດວຽກເພີ່ມຂຶ້ນ ຫລື ເມື່ອຄ່າຈ້າງສູງຂຶ້ນແຮງງານຈະເຮັດວຽກຫຼຸດລົງ?

4. ຈົ່ງອະທິບາຍລັກສະນະອຸປະທານຂອງແຮງງານໃນໄລຍະສັ້ນ ແລະ ໄລຍະຍາວ?

# • ເອກະສານອ້າງອີງ/REFERENCE

• HUMAN DEVELOPMENT ECONOMICS. XIONGTOUA,T. SEANGDALA,CH. BOUNTHUNSSENGNGAM,S. KEODOUANGKHAM,P. (2018).SOUPHANOUVONG UNIVERSITY

# ຂອບໃຈທີ່ຮັບຟັງ

# Thank you

Email Phavone@su.edu.la

Phone +856 20 28 616 221